ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 50/ຫກ

ນະຄອນຫຼວງວຽງຈັນ, ວັນທີ: 05 ທັນວາ 2018

ສໍານັກງານ ຄຄຊ
ເລກ 1279
ວັນທີ 06 DEC 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈໍາອາທິດທີ 19-23/11/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,37% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກດັດຊະນີຍອດການສັ່ງຊື້ຜະລິດສິນຄ້າ ຫຼຸດລົງມາຢູ່ໃນລະດັບ 4,4% ໃນເດືອນ 10/2018 ຈາກທີ່ຫຼຸດລົງມາຢູ່ໃນລະດັບ 0,1% ໃນເດືອນຜ່ານມາ ພ້ອມກັນນັ້ນ, ຈໍານວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທໍາອິດຂອງອາທິດທີ 17/11/2018 ມີຈໍານວນ 224,000 ຄົນ ຈາກຈໍານວນ 221,000 ຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 12-16/11/2018 | ອາທິດນີ້ 19-23/11/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1338 | 1,1380 | -0,37% |
| ເຢນ/ໂດລາ | 113,39 | 112,82 | 0,51% |
| ບາດ/ໂດລາ | 32,970 | 33,060 | -0,27% |
| ເປໂຊ/ໂດລາ | 52,71 | 52,39 | 0,62% |
| ຣູເປັຍ/ໂດລາ | 14.608,00 | 14.545,00 | 0,43% |
| ໂດລາສິງກະໂປ/ໂດລາ | 1,3768 | 1,3750 | 0,13% |
| ຢວນ/ໂດລາ | 6,9472 | 6,9466 | 0,01% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 5,39% ເປັນ 53,89 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນ ມາຢູ່ໃນລະດັບ 4,85 ລ້ານບາເຣວ ໃນອາທິດທີ 16/11/2018 ຈາກເພີ່ມຂຶ້ນຮອດລະດັບ 10,27 ລ້ານບາເຣວ ໃນອາທິດຜ່ານມາ;

- ລາຄາຄຳ ເພີ່ມຂຶ້ນ 0,61% ເປັນ 1.223,48 ໂດລາ/ອອນ ເນື່ອງຈາກຄວາມຜັນຜວນຂອງຄ່າເງິນໂດລາ ເຮັດໃຫ້ນັກລົງທຶນຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ອ່ອນຄ່າລົງ 0,05% ແຕ່ແຂງຄ່າຂຶ້ນ 0,12% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,82% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,07% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 12-16/11/2018 | | | ອາທິດນີ້ 19-23/11/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.627,88 | 8.653,99 | 8.638,77 | 8.631,14 | 8.655,83 | 8.643,24 | -0,04% | -0,02% | -0,05% | -3,82% | -3,80% | -3,82% |
| ບາດ | 266,73 | 267,60 | 267,31 | 266,22 | 267,49 | 267,00 | 0,19% | 0,04% | 0,12% | -4,20% | -4,01% | -4,07% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,18% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 10,56%;

- ປະລິມານເງິນ M2 ຫຼຸດລົງ 0,25% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,44%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (16-22/11/2018) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 0,25 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 18,38 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 18,63 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 235,78 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 149,40 ລ້ານບາດ ແລະ ຂາຍເງິນບາດໄດ້ 385,18 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 36,50% ແລະ ເງິນບາດ ຫຼຸດລົງ 13,22%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດູດຊຶມໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 3,16 ລ້ານໂດລາ ແລະ ດູດຊຶມໂດຍການຊື້ເງິນບາດສຸດທິ ຈຳນວນ 480,73 ລ້ານບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 2,07 ລ້ານໂດລາ ແລະ ເງິນບາດ ຈຳນວນ 40,00 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 09-15/11/2018 | | ອາທິດນີ້ 16-22/11/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **23,53** | **174,19** | **18,38** | **149,40** | **-21,89%** | **-14,23%** |
| - ທ/ຄທຸລະກິດລັດ | 10,70 | 71,22 | 7,55 | 66,72 | -29,44% | -6,32% |
| - ທ/ຄທຸລະກິດອື່ນໆ | 12,83 | 102,97 | 10,83 | 82,68 | -15,59% | -19,70% |
| 2. ການຂາຍເງິນຕາຕ່າງປະເທດ | **34,75** | **441,82** | **·18,63** | **385,18** | **-46,39%** | **-12,82%** |
| - ທ/ຄທຸລະກິດລັດ | 12,84 | 163,46 | 7,87 | 124,84 | -38,71% | -23,63% |
| - ທ/ຄທຸລະກິດອື່ນໆ | 21,91 | 278,36 | 10,76 | 260,34 | -50,89% | -6,47% |
| ຊື້-ຂາຍສຸດທິ ທທກ | **-11,22** | **-267,63** | **-0,25** | **-235,78** | **-97,77%** | **-11,90%** |
| - ຜິດດ່ຽງຊື້-ຂາຍ | -47,68% | -153,64% | -1,36% | -157,82% | -97,15% | 2,72% |
| - ມູນຄ່າການຊື້-ຂາຍ | **58,28** | **616,01** | **37,01** | **534,58** | **-36,50%** | **-13,22%** |
| 3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | **-7,20** | **-19,00** | **-3,16** | **480,73** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,10 | 500,00 | | |
| - ທຫລ ຂາຍໃຫ້ ທທກ | 7,20 | 19,00 | 3,26 | 19,27 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **3,12** | **25,50** | **2,07** | **40,00** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 11/2018 ຄາດວ່າຈະຢູ່ໃນລະດັບ 3,17%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 16,65 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (16-22/11/2018) ໃນນັ້ນ, ສຳລັບກະແສເງິນໄຫຼອອກ ມີຈຳນວນ 137,43 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 99,85 ລ້ານໂດລາສະຫະລັດ ແລະ ລາຍຈ່າຍອື່ນໆ ຈຳນວນ 17,26 ລ້ານໂດລາສະຫະລັດ), ສຳລັບກະແສເງິນໄຫຼເຂົ້າ ແມ່ນມີຈຳນວນ 120,78 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 71,94 ລ້ານໂດລາສະຫະລັດ, ຈາກການກູ້ຢືມຂອງຫົວໜ່ວຍທຸລະກິດ ຈຳນວນ 12,49 ລ້ານໂດລາສະຫະລັດ ແລະ ຮັບຄ່າບໍລິການ ຈຳນວນ 14,85 ລ້ານໂດລາສະຫະລັດ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 748 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 82 ສະບັບ ເທົ່າກັບ 12,31% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 257,72 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 89,60 ຕື້ກີບ ເທົ່າກັບ 25,80%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (16-22/11/2018) ມີທັງໝົດ 3.840 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.803 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 397 ຕື້ກີບ ຈາກ 1.027,20 ຕື້ກີບ ມາເປັນ 1.424,26 ຕື້ກີບ ເທົ່າກັບ 38,65%;

- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 37 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 93,36 ຕື້ກີບ ຈາກ 89,10 ຕື້ກີບ ມາເປັນ 182,45 ຕື້ກີບ ເທົ່າກັບ 104,77%.

**4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 826,89 ຈຸດ ຫຼຸດລົງ ຈາກ 835,76 ຈຸດ ຫຼື ເທົ່າກັບ 1,06% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 1.023.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4.19 ຕື້ກີບ ເພີ່ມຂຶ້ນ 65,15% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 87,89% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ EDL-Gen ແລະ LCC. ສ່ວນສາເຫດການເພີ່ມຂຶ້ນຂອງມູນຄ່າການຊື້-ຂາຍຮຸ້ນ EDL-Gen ໃນອາທິດນີ້ ແມ່ນຜູ້ລົງທຶນຕ່າງປະເທດປະເພດສະຖາບັນສັ່ງຊື້ດ້ວຍມູນຄ່າຊື້-ຂາຍທີ່ສູງເຖິງ 3,47 ຕື້ກີບ ເພື່ອຮັກສາລາຄາຮຸ້ນ EDL-Gen ພາຍຫຼັງທີ່ບໍລິສັດໄດ້ເປີດເຜີຍງົບການເງິນ 9 ເດືອນຕົ້ນປີ 2018 ທີ່ມີກຳໄລສະສົມຫຼຸດລົງຫຼາຍ ຈາກ 1,04 ຕື້ກີບ ລົງເຫຼືອ 564,92 ລ້ານກີບ. ນອກນັ້ນ, ການຊື້-ຂາຍຮຸ້ນ MHTL ໃນອາທິດນີ້ ແມ່ນເພີ່ມຂຶ້ນ ເນື່ອງຈາກການຈັບຄູ່ຊື້-ຂາຍເພີ່ມຂຶ້ນຂອງຜູ້ລົງທຶນພາຍໃນ.

➢ **<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 331.500 | 1.844.680.000 | 5.600 | **87.800** | **486.360.000** | **5.600** | (73,51) | (73,63) | - |
| **EDL-GEN** | 169.900 | 680.040.000 | 4.050 | **912.500** | **3.650.295.000** | **4.000** | 437,08 | 436,78 | (1,23) |
| **LWPC** | - | - | 8.000 | - | - | **8.000** | - | - | - |
| **PTL** | - | - | 1.500 | - | - | **1.500** | - | - | - |
| **SVN** | 2.000 | 3.300.000 | 1.650 | - | - | **1.650** | (100) | (100) | - |
| **PCD** | 100 | 120.000 | 1.200 | - | - | **1.200** | (100) | (100) | - |
| **LCC** | - | - | 1.900 | **4.400** | **7.800.000** | **1.800** | - | - | (5,26) |
| **MHTL** | 2.500 | 7.000.000 | 2.800 | **15.600** | **43.795.000** | **2.900** | 524 | 525,64 | 3,57 |
| **LAT** | 3.100 | 2.170.000 | 700 | **3.100** | **2.165.000** | **700** | - | (0,23) | - |
| ທັງໝົດ | 509.100 | 2.537.310.000 | | **1.023.400** | **4.190.415.000** | | 101,02 | 65,15 | |

**5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>**

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມສະພາແຫ່ງຊາດສະໄໝສາມັນເທື່ອທີ່ 6 ຊຸດທີ VIII, ❷ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ພະຈິກ 2018, ❸ ກອງປະຊຸມສຳມະນາການແກ້ໄຂບັນຫາທາງການເງິນໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ ຮ່ວມກັບກອງທຶນການເງິນສາກົນ, ❹ ກອງປະຊຸມປຶກສາຫາລືການລະດົມທຶນເພື່ອດຸ່ນດ່ຽງງົບປະມານ ແລະ ປະກອບເພີ່ມຄັງສຳຮອງເງິນຕາຕ່າງປະເທດ, ❺ ກອງປະຊຸມປະກອບຄຳເຫັນຕໍ່ຮ່າງບົດແນະນຳ ກ່ຽວກັບການຄົ້ນຄວ້າບໍລິຫານ ສຳລັບບໍລິສັດຈົດທະບຽນ, ❻ ກອງ

ປະຊຸມສຳມະນາວຽກງານ FinTech, ❼ ກອງປະຊຸມສະພາບໍລິຫານທະນາຄານ ສົ່ງເສີມກະສິກຳ ແລະ ❽ ກອງປະຊຸມຄະນະກວດກາວຽກງານທະນາຄານ ສົ່ງເສີມກະສິກຳ.

- ຕ້ອນຮັບການເຂົ້າຢ້ຽມຂໍ່ານັບທ່ານຜູ້ອຳນວຍການໃຫຍ່ ຂອງທະນາຄານ ລາວ-ຝຣັ່ງ;
- ຈັດພິທີເປີດງານກິລາລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດຫວຽດນາມ;

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- ສືບຕໍ່ຄົ້ນຄວ້າ ນຳສະເໜີແຜນພິມເງິນ ເພື່ອກະຕຸ້ນເສດຖະກິດ ຕາມແຜນເງິນຕາປະຈຳປີ 2019 ທີ່ໄດ້ກຳນົດໄວ້;
- ສືບຕໍ່ຕິດຕາມການທົດລອງ ລະບົບອັດຕາດອກເບ້ຍສະເລ່ຍຖ່ວງນໍ້າໜັກ ແລະ ຕິດຕັ້ງໂປຣແກຣມດຳເນີນທຸລະກຳຕະຫຼາດລະຫວ່າງທະນາຄານ ໄລຍະ 02 ພ້ອມທັງກະກຽມແຜນຈັດກອງປະຊຸມເຜີຍແຜ່ວຽກງານ CIB ໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງ;
- ສືບຕໍ່ກະກຽມເງື່ອນໄຂໃຫ້ແກ່ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ II ປີ 2018;
- ສືບຕໍ່ກະກຽມຜ່ານຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ຕໍ່ກອງປະຊຸມສະພາແຫ່ງຊາດສະໄໝສາມັນ ເທື່ອທີ 6 ຊຸດທີ VIII.
- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມປະຈຳປີ ສະພາຜູ້ວ່າການ SEACEN, ❷ ກອງປະຊຸມທາງດ້ານບົດບາດຂອງການສຶກສາທາງດ້ານການເງິນ ແລະ ການປົກປ້ອງຜູ້ຊົມໃຊ້ທາງດ້ານການເງິນ ໃນການສະໜັບສະໜູນການເຂົ້າເຖິງການບໍລິການທາງດ້ານການເງິນ, ❸ ກອງປະຊຸມໃຫຍ່ ສະມາຊິກ ສະມາຄົມສະຖາບັນການເງິນຈຸລະພາກ ຄັ້ງທີ່ II.
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກຄະນະຜູ້ບໍລິຫານ ທະນາຄານ ຫວຽດຕິ່ນ ແລະ ຄະນະເອກະອັກຄະລັດຖະທູດ ສະຫະພາບເອີຣົບ.

ແທນ ຫົວໜ້າຫ້ອງການ

ພູມມະລີ ສີຣິພົນເດດ